# ວິທີການ ໃນການຮັບຢາວັກຊີນ COVID-19 (라오스어)

**<ໜຶ່ງ ມື້ກ່ອນໄປສັກຢາປ້ອງກັນພະຍາດ>**

**01. ໜັງສືຢັ້ງຢືນ ເພື່ອຮັບການສັກຢາວັກຊີນ COVID-19**

⦿ໄດ້ຮັບຂໍ້ຄວາມ ສໍາລັບຂໍ້ມູນການ ຈອງຄິວເພື່ອສັກຢາປ້ອງກັນ ພະຍາດCOVID-19 ແລະໃຫ້ກວດເບິ່ງ ສະຖານທີ່ສັກຢາ ແລະວັນເວລາອີກ ຄັ້ງໜຶ່ງ.

⦿ຍ້ອນວ່າອາດມີການຕິດຂັດດ້ານຈາລະຈອນ, ຄວນທີ່ຈະກວດເບິ່ງເສັ້ນທາງ ການເດີນທາງ ແລະເດີນທາງ ໄປສະຖານທີສັກຢາໂດຍຜ່ານລົດສາ ທາລະນະ.

⦿ ສໍາລັບການສັກຢາປ້ອງກັນໃນມື້ຕໍ່ມາ, ໃຫ້ກຽມເຄື່ອງນຸ່ງທີ່ສາມາດເຫັນສ່ວນເທິງຂອງແຂນທີ່ຈະໄດ້ຮັບການສັກຢາ.

**<ໃນມື້ສັກຢາກັນພະຍາດ>**

**02. ກ່ອນອອກເດີນທາງຈາກເຮືອນ.**

⦿ກວດເບິ່ງສະພາບຂອງມື້ນີ້. ຖ້າທ່ານມີອາການເປັນໄຂ້, ອາດຈະໄດ້ໂຈະໃນການສັກຢາ.

⦿ໃສ່ເສື້ອຜ້າ ແລະ ໜ້າກາກທີ່ກຽມພ້ອມ ແລ້ວເດີນທາງໄປສັກຢາກັນພະຍາດ.

⦿ຄວນຮອດກ່ອນເວລາທີ່ນັດໝາຍໄວ້ 30 ນາທີ.

**03. ເມື່ອຮອດສະຖານທີ່ສັກຢາກັນພະຍາດ**

⦿ເມື່ອທ່ານມາຮອດສະຖານທີ່ສັກຢາກັນພະຍາດແລ້ວ, ໃຫ້ສະແດງບັດປະຈໍາຕົວຂອງທ່ານຫຼື ໜັງສືແຈ້ງຢັ້ງຢືນການ ຈອງຄິວສໍາລັບການສັກຢາຂອງທ່ານ.

⦿ຫຼັງຈາກກວດອຸ່ນຫະພູມຮ່າງກາຍຂອງທ່ານແລ້ວ, ໃຫ້ເຂົ້າໄປທີ່ຫ້ອງລໍຖ້າການສັກຢາ.

**04. ການກະກຽມຕາຕະລາງເບື້ອງຕົ້ນ**

⦿ປະກອບແບບຟອມເບື້ອງຕົ້ນ.

**05. ການປຶກສາຂັ້ນຕົ້ນ (ການປຶກສາກັບທ່ານໝໍ)**

⦿ປຶກສາກັບທ່ານ ໝໍ.

⦿ສອບຖາມຂໍ້ມູນກ່ຽວກັບການສັກຢາ COVID-19.

**06. ການສັກຢາປ້ອງກັນ**

⦿ໄປທີ່ຫ້ອງສັກຢາ ແລະ ຮັບການສັກຢາປ້ອງກັນ COVID-19.

**07. ລໍຖ້າຢູ່ຫ້ອງສັງເກດການ**

⦿ຫຼັງຈາກສັກຢາວັກຊີນ, ລໍຖ້າຢູ່ໃນຫ້ອງສັງເກດການປະມານ 15 - 30 ນາທີ ເພື່ອກະກຽມ ສັງເກດເບິ່ງສິ່ງ ຜິດປົກກະຕິທີ່ອາດເກີດຂຶ້ນ.

**08. ກັບເຮືອນ**

⦿ຫລັງຈາກລໍຖ້າຢູ່ໃນຫ້ອງສັງເກດການ ສໍາເລັດແລ້ວ, ຄວນກັບບ້ານໄວເທົ່າທີ່ຈະໄວໄດ້ ແລະບໍ່ຄວນຢູ່ເກີນເວລາ.

⦿ ໝາຍວັນທີ ທີ່ຈະສັກຢາວັກຊີນຄັ້ງທີສອງ ໃສ່ໃນປະຕິທິນຂອງທ່ານໄວ.້

**09. ເວລາຢູ່ເຮືອນ**

⊙ຫຼັງຈາກການສັກຢາປ້ອງກັນແລ້ວ, ອາການດັ່ງຕໍ່ໄປນີ້ອາດຈະເກີດຂຶ້ນແບບເປັນປົກກະຕິ, ແລະນີ້ແມ່ນປະຕິກິລິຍາ ທີ່ອາດຈະເກີດຂຶ້ນໃນໄລຍະຮ່າງກາຍກຳລັງສ້າງພູມຕ້ານທານ, ແລະສ່ວນໃຫຍ່ຈະຫາຍໄປພາຍໃນ 2-3 ວັນ

| | ພະແນກ | ສະຖານທີ່ສັກຢາປ້ອງກັນ | ຮ່າງກາຍທັງຫມົດ |
|---|---|---|---|
| ອາການທົ່ວໄປແລະການຮັກສາຫຼັງການສັກຢາ | ອາການ | -ປວດ<br>-ໄຄ່ບວມ | -ໄຂ້ -ໜາວສັ່ນ<br>-ເມື່ອຍລ້າ -ເຈັບຫົວ |
| | ການຮັກສາ | -ໃຊ້ຜ້າທີ່ສະອາດ ຈຸ່ມນ້ຳເຢັນແລ້ວເອົາມາປົກໃສ່ບໍລິເວນທີ່ເຈັບນັ້ນ.<br>-ອອກກຳລັງກາຍແຂນ ຫລື ພະຍາຍາມເຄື່ອນໄຫວແຂນ | -ສາມາດຢູ່ບ່ອນອຸ່ນຊຶ່ນແລະພັກຜ່ອນໃຫ້ພຽງພໍ<br>- ນຸ່ງເຄື່ອງທີ່ເບົາບາງ |
| | | -ບໍ່ມີຂໍ້ຫ້າມກ່ຽວກັບການກິນຢາແກ້ໄຂ້ ແລະຢາແກ້ປວດ, ແຕ່ແນະນຳ ໃຫ້ກິນຢາທີ່ບັນຈຸສານອາເຊຕາມິນໂນເຊິ່ງບໍ່ມີຜົນກະທົບໃນການກຳຈັດການອັກເສບ ໃຫ້ ຫຼາຍເທົ່າທີ່ເປັນໄປໄດ້. | ·ກະກຽມຢາແກ້ໄຂ້ ແລະຢາແກ້ປວດກ່ອນການສັກຢາ . |

⊙ອາການສ່ວນໃຫຍ່ຈະດີຂຶ້ນໂດຍການກິນຢາແກ້ໄຂ້ຫລືຢາແກ້ປວດ, ແຕ່ຖ້າມີອາການໄຄ່ບວມ, ເຈັບ, ອອກຜື່ນແດງ ຢູ່ບໍລິເວນສັກຢາເປັນເວລາຫຼາຍກວ່າ 2 ວັນ, ໃຫ້ປຶກສາທ່ານໝໍ.

⊙ຖ້າທ່ານມີອາການແພ້ທີ່ຮຸນແຮງ (ອາການພູມແພ້ ແລະ ອື່ນໆ) ພ້ອມດ້ວຍການຫາຍໃຈຝືດ, ເສຍສະຕິ, ຫຼືມີອາການໄຄ່ບວມຕາມໃບໜ້າ, ກະລຸນາໂທ 911 ໂດຍດ່ວນ ຫຼື ໄປທີ່ຫ້ອງສຸກເສີນທີ່ໃກ້ທີ່ສຸດ.

<ການແປພາສານີ້ໄດ້ເຮັດຢູ່ທີ່ສູນກາງໂທລະສັບ ດານູຣິ 1577-1366>